**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ
ກົມໂຄສະນາເຜີຍແຜ່ກົດໝາຍ

ເລກທີ...254../ກຍ.ກຄຜ

ນະຄອນຫຼວງວຽງຈັນ, ວັນທີ...2 ຕຸລາ...2018

# ບົດລາຍງານ

**ຮຽນ:** ທ່ານລັດຖະມົນກະຊວງຍຸຕິທຳ

**ເລື່ອງ:** ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ແຕ່ປີ 2013-2018.

## I. ສະພາບລວມ

ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ໄດ້ໄຂຂຶ້ນໃນ ວັນທີ 21 ກັນຍາ 2018 ເວລາ 8:30 ໂມງ ທີ່ ສະໂມສອນ ກະຊວງຍຸຕິທຳ ພາຍໃຕ້ການເປັນປະທານຂອງທ່ານ ໄຊສີ ສັນຕິວົງ ລັດຖະມົນຕີກະຊວງຍຸຕິທຳ ມີຜູ້ແທນເຂົ້າຮ່ວມທັງໝົດ 77 ທ່ານ, ຍິງ 20 ທ່ານ ໂດຍມາຈາກບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງສູນກາງ, ອົງການປົກຄອງນະຄອນຫຼວງ, ສະພາປະຊາຊົນນະຄອນຫຼວງ ແລະ ຄະນະກົມພາຍໃນກະຊວງ ໂດຍແມ່ນກົມໂຄສະນາເຜີຍແຜ່ກົດໝາຍເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ LUNA II.

## II. ສະພາບການຈັດຕັ້ງປະຕິບັດ

- ທ່ານ ໄຊສີ ສັນຕິວົງ ລັດຖະມົນຕີກະຊວງຍຸຕິທຳ ໄດ້ກ່າວວ່າ ກອງປະຊຸມຖອດຖອນບົດຮຽນວຽກງານຈົດໝາຍເຫດທາງລັດຖະການ ແມ່ນມີຄວາມໝາຍ ຄວາມສຳຄັນ ເນື່ອງຈາກວ່າຈະເປັນການຍົກສູງຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເປັນເອກະພາບກັນຂອງຜູ້ປະສານງານທີ່ໄດ້ຮັບການແຕ່ງຕັ້ງຂອງພາກສ່ວນຕ່າງໆ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ ນອກນີ້ຍັງເຮັດໃຫ້ຜູ້ປະສານງານວຽກງານດັ່ງກ່າວນັ້ນ ໄດ້ເອົາໃຈໃສ່ນຳເອົາບັນດານິຕິກຳທີ່ມີຜົນບັງຄັບທົ່ວໄປມາພິມລົງໃນຈົດໝາຍເຫດທາງລັດຖະການໄດ້ທັນກຳນົດເວລາ ພ້ອມກັນນັ້ນກໍເພື່ອເຮັດໃຫ້ການຈັດສົ່ງນິຕິກຳໃຫ້ຖືກຕ້ອງຕາມຂັ້ນຕອນ, ສອດຄ່ອງກັບເປົ້າໝາຍ ແລະ ທັນຕາມກຳນົດເວລາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສ້າງນິຕິກຳ. ທ່ານຍັງໄດ້ເນັ້ນຕື່ມອີກວ່າ ເວັບໄຊ໌ຈົດໝາຍເຫດທາງລັດຖະການເປັນເວັບໄຊ໌ທີ່ມີຄວາມສຳຄັນ ເນື່ອງຈາກວ່າບັນດານິຕິກຳ ທີ່ມີຜົນບັງຄັບທົ່ວໄປ ທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວນັ້ນ ຕ້ອງໄດ້ເອົາມາລົງໃນເວັບໄຊ໌ດັ່ງກ່າວເພື່ອໃຫ້ບັນດານິຕິກຳເຫຼົ່ານັ້ນ ມີຜົນສັກສິດຕາມກົດໝາຍ.

ທ່ານຍັງໄດ້ຮຽກຮ້ອງມາຍັງຜູ້ເຂົ້າຮ່ວມກອງປະຊຸມ ຖ້າເຫັນວ່າບັນຫາໃດບໍ່ເຂົ້າໃຈ ຂໍໃຫ້ສະເໜີ ຖາມ ແລະ ມີການແລກປ່ຽນຄວາມເຫັນນຳກັນ ເພື່ອເຮັດໃຫ້ກອງປະຊຸມໃນຄັ້ງນີ້ມີບັນຍາກາດທີ່ດີ ແລະ ໄດ້ຮັບໝາກຜົນສູງ. ຫຼັງຈາກນັ້ນທ່ານກໍໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ຊຶ່ງກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາເຄິ່ງວັນ.

- ທ່ານ  ແດນຽວ ຟິດສ໌ແພັດທຣິກ ຜູ້ອຳນວຍການໂຄງການ Luna II ໄດ້ກ່າວວ່າ ໃນນາມ ໂຄງການລູນາ ສອງຂ້າພະເຈົ້າຍິນດີຕ້ອນຮັບທຸກທ່ານເຂົ້າສູ່ກອງປະຊຸມນີ້ເພື່ອພິຈາລະນາບົດຮຽນທີ່ຖອດຖອນໄດ້ກ່ຽວກັບຈົດໝາຍເຫດທາງລັດຖະການ, ໂດຍສ່ວນໃຫຍ່ແມ່ນມັກເວົ້າກັນສັ້ນທັງພາລາວ ແລະ ພາສາອັງກິດວ່າ EOG. ພວກເຮົາຖືເປັນກຽດຢ່າງຍິ່ງທີ່ໄດ້ສະໜັບສະໜູນກະຊວງຍຸຕິທຳໃນການຈັດກອງປະຊຸມນີ້.

LUNA II ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານສະຫາລັດອາເມລິກາ. ຈຸດປະສົງຂອງໂຄງການແມ່ນເພື່ອສົ່ງເສີມການຄ້າ ແລະ ການລົງທຶນຢູ່ ສປປ ລາວ. ຈຸດປະສົງຂອງວຽກງານພວກເຮົາແມ່ນເພື່ອສ້າງໂອກາດທາງດ້ານເສດຖະກິດ ແລະ ຊ່ວຍຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວ. ປັດຈຸບັນໂຄງການຂອງພວກເຮົາໄດ້ເຮັດວຽກຢ່າງໃກ້ຊິດກັບ ຈົດໝາຍເຫດທາງລັດຖະການ ເພື່ອເຮັດໃຫ້ວຽກງານດັ່ງກ່າວຍືນຍົງ.

ແຕ່ໃນຄະນະດຽວກັນຈົດໝາຍເຫດທາງລັດຖະການ ເປັນສິ່ງທີ່ຄົນລາວພາກພູມໃຈ ເຖິງແມ່ນວ່າມັນ ຍັງບໍ່ທັນສົມບູນເທື່ອກໍ່ຕາມ. ຊຶ່ງເຫັນວ່າມີຫຼາຍໆ ນິຕິກຳທີ່ອອກໂດຍບາງກະຊວງ ສຳນັກງານອົງການຍັງບໍ່ຖືກເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ຊຶ່ງຍັງມີຈຳນວນຫຼາຍ.

ສິ່ງທ້າທາຍອີກຢ່າງໜຶ່ງຄືຢູ່ຂັ້ນແຂວງ. ການມີສ່ວນຮ່ວມກັບວຽກງານຈົດໝາຍເຫດທາງລັດຖະການຖືວ່າຍັງຕ່ຳຫຼາຍ.  ອີກດ້ານໜຶ່ງພວກເຮົາສັງເກດເຫັນໄດ້ວ່າແຂວງຕ່າງໆ ຊຶ່ງເປັນແຂວງທີ່ໃຫຍ່ ເສດຖະກິດຂະຫຍາຍຕົວການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ຖ້າທຽບໃສ່ແຂວງທີ່ນ້ອຍແມ່ນຍັງຕ່ຳຫຼາຍເຊັ່ນ: ໃນທາງກົບກັນ ປຽບທຽບແຂວງທີ່ໃຫຍ່, ອຸດົມສົມບູນ ແລະ ເປັນແຂວງທີ່ເສດຖະກິດດີ ເຊັ່ນ: ແຂວງສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ. ໃນການເຄື່ອນໄຫວວຽກງານໃນແຕ່ລະດ້ານບໍ່ວ່າບ່ອນໃດ ຫຼື ສະຖານທີ່ໃດກໍ່ພົບທັງດ້ານດີ ແລະ ດ້ານອ່ອນແຕ່ຖ້າເບິ່ງໃນດ້ານຂອງວຽກງານຈົດໝາຍເຫດທາງລັດຖະການ, ຈະບໍ່ປາກົດເຫັນຜົນງານໃດເລີຍໃນວຽກງານດັ່ງກ່າວນີ້. ນິຕິກຳຂອງ 2 ແຂວງ ມີພຽງ 5 ສະບັບ, 2 ສະບັບຈາກສະຫວັນນະເຂດ ແລະ 3 ສະບັບຈາກນະຄອນຫຼວງວຽງຈັນ. ດັ່ງນັ້ນໃນການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ແລະ ລະບຽບການແນ່ນອນ ປັດຈຸບັນນີ້ ອາດມີຫຼາຍຂໍ້ຕົກລົງ ແລະ ຄຳສັ່ງໃນສຳນັກງານປົກຄອງແຂວງສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ, ແຕ່ປະຊາຊົນຍັງບໍ່ຮູ້ວ່າມີລະບຽບການເຫຼົ່ານີ້. ສຳລັບພວກເຂົາແລ້ວຖືວ່າບໍ່ມີກົດລະບຽບຄຸ້ມຄອງ. ດັ່ງນັ້ນ, ເຮັດແນວໃດໃຫ້ປະຊາຊົນຮັບຮູ້ ແລະ ທຸກພາກສ່ວນໃນສັງຄົມຕ້ອງຮ່ວມກັນ, ປະສານງານກັນ ຕອບສະໜອງຂໍ້ມູນໃຫ້ກັນ ເພື່ອໃຫ້ວຽກງານໄດ້ຈັດຕັ້ງປະຕິບັດສຳເລັດຜົນ.

- ທ່ານ ນາງ ຄອນສະຫ້ອນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ໄດ້ນຳສະເໜີກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ແລະ ຈຸດປະສົງຂອງກອງປະຊຸມ ທ່ານໄດ້ຍົກໃຫ້ເຫັນເຖິງຄວາມເປັນມາໃນການສ້າງຕັ້ງພະແນກຈົດໝາຍເຫດທາງລັດຖະການ, ການສ້າງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ແລະ ການເປີດບໍລິການນຳໃຊ້ເວັບໄຊ໌, ຜ່ານການປະຕິບັດວຽກງານກໍ່ເຫັນໄດ້ເຖິງຄວາມຈຳເປັນຈຶ່ງໄດ້ມີການປັບປຸງຂໍ້ຕົກລົງດັ່ງກ່າວເພື່ອໃຫ້ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງ ຈາກນັ້ນທ່ານກໍໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ໃນຂັ້ນສູນກາງ ແລະ ຂັ້ນແຂວງ ໂດຍສະເພາະແມ່ນຜົນສຳເລັດໃນການຈັດຕັ້ງປະຕິບັດ ບັນຫາ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ນອກຈາກນັ້ນ, ກໍໄດ້ຍົກໃຫ້ເຫັນ ກ່ຽວກັບການນຳເອົາ

ນິຕິກຳຂອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ພິມລົງໃນເວັບໄຊ໌ ແຕ່ປີ 2013 ຈົນເຖິງປັດຈຸບັນ ຊຶ່ງມີນິຕິກຳຈຳນວນ 682 ກວ່າສະບັບ.

## III. ຈຸດດີ, ຈຸດອ່ອນ ແລະ ຂໍ້ຄົງຄ້າງ

### ❖ ຈຸດດີ

- ຍ້ອນຄະນະພັກ-ຄະນະນຳມີຄວາມເອົາໃຈໃສ່ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານຢ່າງເປັນປະຈຳ;
- ຄະນະພັກ-ຄະນະນຳບັນດາກະຊວງໄດ້ຮັບຮູ້ ແລະ ເຂົ້າໃຈ ເຖິງຄວາມໝາຍຄວາມສຳຄັນຂອງວຽກງານຈົດໝາຍເຫດທາງລັດຖະການ ແລະ ໄດ້ເອົາໃຈໃສ່ໃນການຊີ້ນຳ-ນຳພາວຽກງານຈົດໝາຍເຫດທາງລັດຖະການຢ່າງມີປະສິດທິຜົນ;
- ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ໄດ້ຮັບຮູ້ ແລະ ເຂົ້າໃຈ ເລິກເຊິ່ງ ກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນຂອງນິຕິກຳທີ່ພິມລົງໃນເວັບໄຊຈົດໝາຍເຫດທາງລັດຖະການ;
- ຂອດການປະສານງານລະຫວ່າງບັນດາພາກສ່ວນຕ່າງໆອ້ອມຂ້າງສູນກາງ ກັບພະແນກຈົດໝາຍເຫດທາງລັດຖະການມີຄວາມເຂັ້ມແຂງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ;

### ❖ ຈຸດອ່ອນ

- ພະນັກງານທີ່ຮັບຜິດຊອບວຽກງານນິຕິກຳ ຍັງບໍ່ທັນມີຄວາມຮັບຜິດຊອບ ແລະ ເອົາໃຈໃສ່ເທົ່າທີ່ຄວນ;
- ລະບົບການປະສານງານຍັງບໍ່ທັນໄດ້ຮັບການເອົາໃຈໃສ່ຢ່າງແທດເໝາະ;
- ບາງພາກສ່ວນໄດ້ມີການຊັບຊ້ອນພະນັກງານໃໝ່ ຈຶ່ງເປັນສາເຫດເຮັດໃຫ້ຂອດການປະສານງານບໍ່ໄດ້ຮັບຜົນເທົ່າທີ່ຄວນ;
- ບາງພາກສ່ວນຍັງບໍ່ເຂົ້າໃຈເຖິງຄວາມສຳຄັນຂອງວຽກງານຈົດໝາຍເຫດທາງລັດຖະການ.

### ❖ ຂໍ້ຄົງຄ້າງ

- ບໍ່ສາມາດສັງລວມບັນດານິຕິກຳຍ້ອນຫຼັງ ຫຼື ນິຕິກຳທີ່ມີຜົນກ່ອນກົດໝາຍ ວ່າດ້ວຍການສ້າງນິຕິກຳ ເພື່ອມາພິມລົງໃນເວັບໄຊ໌ ແລະ ມີຜົນສັກສິດຕາມກົດໝາຍ ເຊັ່ນ: ນິຕິກຳທີ່ອອກແຕ່ຊຸມປີ 1991 ທີ່ຍັງມີຜົນນຳໃຊ້ເຖິງປັດຈຸບັນ.

## IV. ພາກສະເໜີ

- ສະເໜີໃຫ້ກະຊວງຍຸຕິທຳ ອອກນິຕິກຳໃດໜຶ່ງຕື່ມ ເພື່ອແຈ້ງຫາຄະນະນຳຂອງແຕ່ລະພາກສ່ວນ ໃນການສັງລວມບັນດານິຕິກຳ ເພື່ອພິມລົງຈົດໝາຍເຫດທາງລັດຖະການ;
- ສະເໜີໃຫ້ມີການຝຶກອົບຮົມກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ ໃຫ້ພະນັກງານບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງຕື່ມອີກ;
- ສະເໜີໃຫ້ຈັດກອງປະຊຸມຕື່ມອີກ ເພື່ອເປັນການແລກປ່ຽນຖອດຖອນບົດຮຽນຊຶ່ງກັນ ແລະ ກັນຢ່າງເປັນປະຈຳ.

ພາຍຫຼັງໄດ້ຮັບຟັງການບັນຍາຍ ແລະ ຟັງຄຳຄິດເຫັນຕ່າງໆຢູ່ໃນກອງປະຊຸມນັ້ນ ທ່ານລັດຖະມົນຕີ ກະຊວງຍຸຕິທຳ ກໍໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ດັ່ງນີ້:

1) ສືບຕໍ່ໃນການປັບປຸງວຽກງານໃຫ້ມີການປ່ຽນແປງຢ່າງຕັ້ງໜ້າ ບໍ່ວ່າຈະເປັນເອກະສານສຳຄັນຕ່າງໆຕ້ອງໄດ້ມາພິມລົງໃນຈົດໝາຍເຫດທາງລັດຖະການໃຫ້ຫຼາຍຂຶ້ນກວ່າເກົ່າ;
2) ສືບຕໍ່ຮັບໂຮມນິຕິກຳ ທີ່ປະກາດໃຊ້ກ່ອນ 2013 ເຖິງ 2018 ສະຫຼຸບນິຕິກຳແລ້ວສົ່ງມາໃຫ້ພະແນກຈົດໝາຍເຫດທາງລັດຖະການ;
3) ສະເໜີໃຫ້ກົມໂຄສະນາເຜີຍແຜ່ກົດໝາຍຮີບຮ້ອນຄົ້ນຄວ້າອອກນິຕິກຳ ຫຼື ເອກະສານແຈ້ງການສະເພາະໃນການສົ່ງນິຕິກຳມາລົງຈົດໝາຍເຫດທາງລັດຖະການ ແລ້ວສົ່ງໃຫ້ແຕ່ລະພາກສ່ວນຈັດຕັ້ງປະຕິບັດ;
4) ສືບຕໍ່ຈັດຕັ້ງຝຶກອົບຮົມຂັ້ນຕອນ, ວິທີການຕ່າງໆໃຫ້ແກ່ພະນັກງານແຕ່ລະກະຊວງ;
5) ໃຫ້ໂຄງການ LUNA II ໃຫ້ການສະໜັບສະໜູນຕື່ມທາງດ້ານງົບປະມານໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ຫຼັງຈາກນັ້ນ, ທ່ານລັດຖະມົນຕີກໍ ກະຊວງຍຸຕິທຳ ໄດ້ສະແດງຄວາມຊົມເຊີຍ ຕໍ່ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ຂໍໃຫ້ບັນດາທ່ານ ນຳເອົາຄວາມຮູ້ ແລະ ຜົນສຳເລັດຕ່າງໆນຳໄປໝູນໃຊ້ເຂົ້າໃນກົມກອງຂອງພວກທ່ານໃຫ້ດີຂຶ້ນ, ຫຼັງຈາກນັ້ນ ທ່ານລັດຖະມົນຕີ ກະຊວງຍຸຕິທຳ ກໍໄດ້ກ່າວປິດກອງປະຊຸມຢ່າງເປັນທາງການ.

ຊຶ່ງກອງປະຊຸມໄດ້ປິດລົງໃນເວລາ 11 : 30 ໂມງຂອງວັນດຽວກັນ.

ແທນ **ຫົວໜ້າກົມ;**

ນ.ຄອນສະຫວັນ ສາວະລີ